ພິທີເຊັນສັນຍາວ່າດ້ວຍການເປັນຕົວແທນຮັບຊຳລະຄ່າທຳນຽມທາງ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ທະນາຄານສົ່ງເສີມກະສິກຳ

ທີ່ ນະຄອນຫຼວງວຽງຈັນ, ວັນທີ 04/09/2018

ໃນວັນທີ 04 ກັນຍາ 2018, ທີ່ທະນາຄານສົ່ງເສີມກະສິກຳ ສຳນັກງານໃຫຍ່ ໄດ້ຈັດພິທີເຊັນສັນຍາວ່າດ້ວຍການເປັນຕົວແທນຮັບຊຳລະຄ່າທຳນຽມທາງ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ແລະ ທະນາຄານສົ່ງເສີມກະສິກຳ (ທສກ). ຕາງໜ້າລົງນາມໃນຄັ້ງນີ້ໂດຍ **ທ່ານ ນັນທະລາດ ແກ້ວປະເສີດ**, ຮອງຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ **ທ່ານ ຄຳແກ້ວ ວິສິສົມບັດ**, ຮອງອຳນວຍການ ທະນາຄານສົ່ງເສີມກະສິກຳ. ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ທ່ານ ວຽງສະຫວັນ ທິດາວັນ ຕາງໜ້າຈາກກົມຄຸ້ມຄອງທະນາຄານທຸລະກິດ ທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະຜູ້ບໍລິຫານທັງສອງຝ່າຍ, ຄະນະພະແນກ, ຄະນະສູນ ແລະ ສາຂາ ຂອງ ທຄຕລ ແລະ ທສກ ພາຍໃນນະຄອນຫຼວງວຽງຈັນ ຕະຫຼອດຮອດພະນັກງານຂອງທັງສອງຝ່າຍ ແລະ ສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.



ພາຍຫຼັງທີ່ ທຄຕລ ໄດ້ສຳເລັດການເຊັນສັນຍາຮ່ວມມືກັບ ກົມສ່ວຍສາອາກອນ ກະຊວງການເງິນ ໃນການພັດທະນາລະບົບຄຸ້ມຄອງເກັບຄ່າທຳນຽມທາງປະຈຳປີ, ທຄຕລ ກໍ່ໄດ້ເປີດບໍລິການນຳໃຊ້ລະບົບຢ່າງເປັນທາງການໃນທົ່ວລະບົບ ໃນວັນທີ 30 ຕຸລາ 2017 ໂດຍໄດ້ເປີດບໍລິການຜ່ານ 5 ຊ່ອງທາງຄື: 1. ຜ່ານເຄົາເຕີ້ບໍລິການ, 2. ຕູ້ ATM, 3. ຕູ້ Kiosk, 4. BCEL One ແລະ 5. ຕົວແທນເງິນດ່ວນຊຸມຊົນ(BCOME) ເຊິ່ງເຫັນໄດ້ວ່າ ມີການຕອບຮັບທີ່ດີຫຼາຍ ແລະ ສາມາດເກັບລາຍຮັບເຂົ້າງົບປະມານລັດໄດ້ຢ່າງມີປະສິດທິຜົນ.

ບໍລິການເສຍຄ່າທຳນຽມທາງດ້ວຍລະບົບທີ່ທັນສະໄໝ ຜ່ານລະບົບທະນາຄານນີ້ ແມ່ນອີກໜຶ່ງບໍລິການດ້ານອີເລັກໂທຣນິກ ທີ່ອຳນວຍຄວາມສະດວກໃຫ້ແກ່ພໍ່ແມ່ປະຊາຊົນທຸກໆທ່ານ ໃນການຊຳລະພັນທະຄ່າທຳນຽມທາງ ຊຶ່ງເປັນ

ບໍລິການທີ່ມີຄວາມປອດໄພ ສາມາດຫຼຸດຜ່ອນການນຳໃຊ້ເງິນສົດ, ສ້າງຄວາມສະດວກໃຫ້ລັດຖະບານໃນການເກັບລາຍຮັບຈາກໂຄງການດັ່ງກ່າວ.

ເພື່ອເປັນການຂະຫຍາຍຕາໜ່າງການບໍລິການ ລະບົບຊຳລະຄ່າທຳນຽມທາງປະຈຳປີ ໃຫ້ຮອງຮັບການບໍລິການໄດ້ຢ່າງທົ່ວເຖິງ ແລະ ກວ້າງຂວາງຍິ່ງຂຶ້ນ, ທຄຕລ ໄດ້ພັດທະນາລະບົບດັ່ງກ່າວໃຫ້ສາມາດຮອງຮັບການບໍລິການຊຳລະຄ່າທາງໄດ້ຢູ່ທີ່ ທສກ ແລະ ພ້ອມກັນນັ້ນກໍ່ໄດ້ສຸມໃສ່ການຮ່າງສັນຍາຂຶ້ນ ເພື່ອເປັນການກຳນົດຫຼັກການ ຂອບເຂດເນື້ອໃນ ແລະ ລາຍລະອຽດອື່ນໆ ຂອງການຮ່ວມມືກັນໃນພັດທະນາລະບົບດັ່ງກ່າວ. ປະຈຸບັນ, ການພັດທະນາລະບົບແມ່ນສຳເລັດ ແລະ ສາມາດໃຫ້ບໍລິການຜ່ານປ່ອງບໍລິການ ທສກ ໄດ້ແລ້ວ. ນອກຈາກນີ້, ທຄຕລ ຍັງຈະໄດ້ສືບຕໍ່ພັດທະນາໃຫ້ລະບົບດັ່ງກ່າວ ສາມາດຮອງຮັບການບໍລິການອື່ນໆອີກໃນຕໍ່ໜ້າ.

ນະໂອກາດນີ້ຂໍສະແດງຄວາມຂອບໃຈມາຍັງລູກຄ້າທຸກທ່ານທີ່ນຳໃຊ້ຜະລິດຕະພັນ ແລະ ບໍລິການ ຂອງ ທຄຕລ ຕະຫຼອດມາ. ທຄຕລ ຈະສືບຕໍ່ພັດທະນາລະບົບການບໍລິການໃຫ້ມີຄວາມທັນສະໄໝ ແລະ ສືບຕໍ່ຮ່ວມມືກັບພາກສ່ວນອື່ນໆເພື່ອອຳນວຍຄວາມສະດວກໃນການຊຳລະສະສາງຕ່າງໆຂອງລູກຄ້າ ໃນຍຸກແຫ່ງການບໍລິການທະນາຄານແບບດີຈີຕໍ.







ຄານການຄ້າຕ່າງປະເທດລາວ ມະຫາຊົນ
ທັນສະໄໝ ອ່ອງໄວ ໝັ້ນໃຈ
Facebook: BCEL Bank, Website: www.bcel.com.la